ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 16 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 06 OCT 2026

ແຈ້ງການ

ກ່ຽວກັບການຍົກເວັ້ນການຈັດຕັ້ງປະຕິບັດເນື້ອໃນຂອງມາດຕາ 15 ຂອງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ສະບັບເລກທີ 23/ຄຄຊ, ລົງວັນທີ 16 ກໍລະກົດ 2021.

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ສະບັບເລກທີ 23/ຄຄຊ, ລົງວັນທີ 16 ກໍລະກົດ 2021;
- ອີງຕາມ ການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ.....ລົງວັນທີ... ກັນຍາ 2026.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງຜູ້ລົງທຶນພາຍໃນ ປະກອບດ້ວຍ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດປະກັນໄພ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ລັດວິສາຫະກິດ ແລະ ນິຕິບຸກຄົນ ກໍລະນີທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ສາມາດໄປລົງທຶນຊື້ ຂາຍຫຼັກຊັບໂດຍກົງໄດ້ ໂດຍບໍ່ຈຳເປັນຕ້ອງຜ່ານບໍລິສັດຫຼັກຊັບພາຍໃນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງ ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ສະບັບເລກທີ 23/ຄຄຊ, ລົງວັນທີ 16 ກໍລະກົດ 2021.

ດັ່ງນັ້ນ, ຈຶ່ງໄດ້ອອກແຈ້ງການສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ປະທານ

ສະເຫລີມໄຊ ກົມມະສິດ